# ທຄຕລ ຈັດກິດຈະກຳຍ່າງເພື່ອສຸຂະພາບ ເນື່ອງໃນໂອກາດສະເຫຼີມສະຫຼອງ ວັນທັນເປັນທຸລະກິດຂອງ ທຄຕລ ຄົບຮອບ 36 ປີ

## ວັນທີ 01 ພະຈິກ 1989 – 01 ພະຈິກ 2025











**ໃນຕອນເຊົ້າ ວັນທີ 01 ພະຈິກ 2025 ເລີ່ມແຕ່ເວລາ 5:30 ໂມງ ທີ່ເດີ່ນເຈົ້າອານຸວົງ (ແຄມຂອງ) ນະຄອນຫຼວງວຽງຈັນ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ໄດ້ຈັດຂະບວນການຍ່າງເພື່ອສຸຂະພາບ ເນື່ອງໃນໂອກາດ ສະເຫຼີມສະຫຼອງວັນຫັນເປັນທະນາຄານທຸລະກິດຂອງ ທຄຕລ ຄົບຮອບ 36 ປີ, ພາຍໃຕ້ການເປັນປະທານຂອງ **ທ່ານ ນາງ ສາຍສະໝອນ ຈັນທະຈັກ** ຜູ້ອຳນວຍການ ທຄຕລ, ໃຫ້ກຽດເຂົ້າຮ່ວມງານໃນຄັ້ງນີ້ໂດຍມີການນຳຂັ້ນສູງ ຂອງ ທະນາຄານແຫ່ງ ສປປ ລາວ, ຄະນະຜູ້ບໍລິຫານ ຂອງ ທຄຕລ, ຕາງໜ້າຈາກ ກະຊວງການເງິນ, ບໍລິສັດຄູ່ຮ່ວມທຸລະກິດຂອງ ທຄຕລ, ພະນັກງານ, ອະດີດພະນັກງານການນຳຂອງ ທຄຕລ ພ້ອມດ້ວຍ ລູກຄ້າຂອງ ທຄຕລ ກໍໄດ້ໃຫ້ກຽດເຂົ້າຮ່ວມ ເຊິ່ງບັນຍາກາດເຕັມໄປດ້ວຍຄວາມເບີກບານ ມ່ວນຊື່ນ ແລະ ເປັນຂະບວນຟົດຟື້ນ.




ນະໂອກາດນີ້ **ທ່ານ ນາງ ສາຍສະໝອນ ຈັນທະຈັກ** ຜູ້ອຳນວຍການ ທຄຕລ ໄດ້ກ່າວເຖິງປະຫວັດຂອງການຫັນເປັນທະນາຄານທຸລະກິດຂອງ ທຄຕລ ໂດຍຫຍໍ້ ເຊິ່ງໄດ້ຍົກໃຫ້ເຫັນເຖິງຜົນງານຂອງ ທຄຕລ ໃນການປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດຂອງຊາດ ຕະຫຼອດໄລຍະ 36 ປີ ພາຍໃຕ້ການນຳພາອັນສະຫຼາດສ່ອງໃສຂອງພັກ ແລະ ລັດຖະບານ. ນອກຈາກນັ້ນ, ທ່ານຜູ້ອຳນວຍການ ທຄຕລ ກໍຍັງໄດ້ສະແດງຄວາມຍ້ອງຍໍຊົມເຊີຍບັນດາຜູ້ບໍລິຫານ ແລະ ພະນັກງານຂອງ ທຄຕລ ໃນແຕ່ລະຮຸ່ນຄົນທີ່ໄດ້ປະກອບສ່ວນທຸ້ມເທເຫື່ອແຮງທັງກາຍ ແລະ ໃຈ ເຂົ້າໃນການປະຕິບັດໜ້າທີ່ ທີ່ໄດ້ຮັບມອບໝາຍ ອັນໄດ້ນຳມາເຊິ່ງຜົນສຳເລັດທີ່ພົ້ນເດັ່ນໃນຫຼາຍໆດ້ານ ພ້ອມທັງ ກ່າວຄຳຂອບໃຈ ແລະ ອວຍພອນໄຊອັນປະເສີດມາຍັງບັນດາແຂກທີ່ມາຮ່ວມງານ ຕະຫຼອດເຖິງບັນດາລູກຄ້າທີ່ໃຫ້ຄວາມເຊື່ອໝັ້ນທີ່ໃຊ້ບໍລິການ ຈົ່ງປະສົບຜົນສຳເລັດໃນໜ້າທີ່ການງານ ຈະເລີນຮຸ່ງເຮືອງໃນທຸລະກິດຕາມຄວາມມຸ່ງໝັ້ນປາດຖະໜາທຸກປະການ.







**ຂ່າວໂດຍ:** ຂະແໜງພົວພັນນັກລົງທຶນ & ຮ່ວມມືສາກົນ https://www.bcel.com.la// bcelhqv@bcel.com.la